# ບົດຮຽນໂຮງຮຽນວັນອາທິດ

## ວັນອາທິດ ທີ 29 ມົກກະຣາ ໒006 (1-໒9-໒006)

---

## <u>ເຣື່ອງຄວາມບໍຣິສຸດທາງເພດ</u>

**<u>ຂໍ້ພຣະຄັມພີໃນບົດຮຽນ:</u>** ປະຖົມມະການ ໒:18,໒1-໒5; ສຸພາສິດ 5:15-໒0; ໂຣມ 13:11-14

**<u>ພຣະຄັມພີແຫ່ງຄວາມຈິງ:</u>** ການດຳຣົງຊີວິດທີ່ບໍຣິສຸດໃນສິນທັມນຳຄວາມອີ່ມເອີບມາສູ່ຕົນແລະນຳຄວາມປິຕິຍິນດີມາສູ່ອົງພຣະຜູ້ເປັນເຈົ້າ.

**<u>ຜົນສະທ້ອນຕໍ່ຊີວິດ:</u>** ບົດຮຽນນີ້ໄດ້ແຕ່ງຂຶ້ນເພື່ອຊ່ວຍທ່ານພັດທະນາທັສນະທີ່ຖືກຕ້ອງຕໍ່ຫົວເຣື່ອງນີ້ໂດຍ:

- ການເຂົ້າໃຈຕໍ່ຄວາມສຳຄັນຂອງຄວາມບໍຣິສຸດທາງເພດສຳລັບພວກທີ່ຍັງເປັນໂສດແລະພວກທີ່ແຕ່ງງານໄປແລ້ວກໍເຊັ່ນກັນ; ແລະ
- ການຍິນຍອມຂອງທ່ານໃນການດຳຣົງຊີວິດພາຍໃນຂອບເຂດທີ່ພຣະເຈົ້າກຳນົດໄວ້ໃນດ້ານສິນທັມແລະໃນດ້ານຄວາມບໍຣິສຸດທາງເພດ.

## <u>ການຕິດຕາມຂອບເຂດທີ່ພຣະເຈົ້າກຳນົດໄວ້ໃນດ້ານທາງເພດແລະດ້ານຄວາມບໍຣິສຸດທາງສິນທັມຈະມີຜົນສະທ້ອນຕໍ່ຊີວິດແລະສາຍສຳພັນຂອງຂ້າພະເຈົ້າຢ່າງໃດ?</u>

"ມັນຊ່າງຊາບຊຶ້ງທີ່ສຸດເລີຍ" ຊາລີໄດ້ບອກເພື່ອນຂອງລາວ. "ຫລັງຈາກກິນເຂົ້າແລງແລ້ວ, ພວກເຮົາໄດ້ນັ່ງຢູ່ໃນສວນສາທາຣະນະແຫ່ງນີ້ເມື່ອລາວຄຸເຂົ່າຂ້າງນຶ່ງລົງແລ້ວຖາມໃຫ້ຂ້ອຍແຕ່ງງານກັບລາວ! ຂ້ອຍມີຄວາມຕື່ນເຕັ້ນ! ຫລັງຈາກຮຽບຮ້ອຍທຸກຢ່າງ, ພວກເຮົາກໍຢູ່ຮ່ວມກັນເປັນເວລາສອງປີ! ເຖິງຢ່າງໃດກໍຕາມ, ພວກເຮົາໄດ້ມີແຜນຕຽມທຸກຢ່າງແລ້ວ. ພວກເຮົາຍັງໄດ້ໄປຫ້ອງຮຽນທີ່ໂບດແຫ່ງນີ້ເພື່ອຈະໄດ້ຣາຄາພ່ອນໃນຄ່າທຳນຽມພິທີແຕ່ງງານອີກດ້ວຍ! ເພື່ອນຂອງຊາລີຮັບຟັງຢ່າງສຸພາບ, ແຕ່ວ່າລາວກໍຄິດຢາກຈະຖາມຊາລີຖ້າວ່າລາວຫາກບໍ່ເຫັນຄວາມບໍ່ເກົ່ງຊາກັນລະຫວ່າງຄຸນຄ່າທາງສິນທັມຂອງລາວແລະບົດຮຽນທີ່ລາວໄດ້ຮຽນໃນໂບດນັ້ນ.

ຈະມີວັນນຶ່ງເມື່ອຈຳນວນຄູ່ຂອງຄົນທີ່ຢູ່ຮ່ວມກັນໂດຍບໍ່ໄດ້ແຕ່ງງານກັນຈະເພີ່ມຫລາຍຂຶ້ນແລະເມື່ອການແຕ່ງງານແລະຄອບຄົວຖືກຂູ່ເຂັນຍ້ອນຄວາມຕັ້ງໃຈທີ່ຈະປ່ຽນຄວາມຫມາຍໃຫມ່ຂອງສັງຄົມທີ່ມີສະຖາບັນອັນແຂງແກ່ນ, ຕລອດທັງຄຣິສຕຽນເອງກໍສົງສັຍວ່າເຣື່ອງເພດແລະເຣື່ອງຄວາມບໍຣິສຸດທາງສິນທັມມີຄ່າພໍທີ່ເກັບແລະປົວຣະບັດຮັກສາໄວ້. ແຕ່ວ່າ, ພຣະຄັມພີໄດ້ຢັ້ງຢືນໄວ້ຢ່າງແຈ່ມແຈ້ງ, ການຕິດຕາມການອອກແບບຂອງພຣະເຈົ້າສຳລັບທາງສິນທັມແລະເຣື່ອງເພດເປັນທີ່ເຫັນຊອບຕໍ່ອົງພຣະຜູ້ເປັນເຈົ້າແລະນຳຄວາມຄົບເຕັມແລະຄວາມເພິ່ງພໍໃຈຢ່າງຍິ່ງໃຫຍ່ມາສູ່ຕົວເອງ.

## <u>ສຶກສາພຣະຄັມພີ</u>

**1. <u>ການອອກແບບຂອງພຣະເຈົ້າເຫມາະກັບຄວາມຕ້ອງການຂອງມະນຸດ</u>** (ປະຖົມມະການ ໒:18,໒1-໒5)

ຂນະທີ່ທຸກໆຄົນຍິນດີທີ່ໄດ້ຢູ່ໂດດດ່ຽວບາງຄັ້ງບາງຄາວ, ທີ່ແທ້ຈິງແລ້ວແມ່ນເຮົາຕັ້ງຫນ້າຢາກຢູ່ກັບຄົນອື່ນ. ນັ້ນແມ່ນພາກສ່ວນພື້ນຖານຂອງທຳມະຊາດມະນຸດທີ່ເຮັດໃຫ້ພວກເຮົາໄຝ່ຫາສາຍສຳພັນ. ພຣະເຈົ້າໄດ້ສ້າງມະນຸດໃຫ້ມີຄວາມຕ້ອງການທາງສັງຄົມພ້ອມທັງຄວາມຕ້ອງທາງດ້ານຊີວະວິທຍາ. ພຣະອົງຍັງໄດ້ສ້າງທາງທີ່ສມ່ຳສເມີກັບຄວາມບໍຣິສຸດຂອງພຣະອົງໃຫ້ບັນລຸເຖິງຄວາມຕ້ອງການເຫລົ່ານັ້ນອີກດ້ວຍ.

ເມື່ອພຣະເຈົ້າໄດ້ຊົງສ້າງອາດາມ, ຜູ້ຊາຍຄົນທຳອິດ, ພຣະອົງເວົ້າວ່າ. "**ບໍ່ເປັນການສົມຄວນທີ່ໃຫ້ຜູ້ຊາຍຢູ່**

**ຢ່າງໂດດດ່ຽວເຊັ່ນນີ້**." ພຣະເຈົ້າໄດ້ສ້າງ**ຜູ້ຊ່ວຍຜູ້ນຶ່ງ**ທີ່ຄືຜູ້ຊາຍ. ຄຳວ່າຄືໃນທີ່ນີ້ມີຄວາມໝາຍຢ່າງແທ້ຈິງວ່າ "ໜ້າຕໍ່ໜ້າ," ຫລື "ການຕິດຕໍ່ພົວພັນກັນ." ມັນຊ່ອນເລື່ອນແນວຄິດທີ່ວ່າຜູ້ຊາຍກັບຜູ້ຍິງຊ່າງເໝາະສົມຕໍ່ຄວາມຕ້ອງການຂອງຊຶ່ງກັນແລະກັນ-ທາງສັງຄົມ, ທາງຊີວະວິທຍາ, ແລະທາງວິນຍານ. ໃນການປະທານເພື່ອນຮ່ວມງານທີ່ເໝາະສົມໃຫ້ອາດາມ, ພຣະເຈົ້າຍັງໄດ້ໃຫ້ເພື່ອນຮ່ວມງານທີ່ເໝາະສົມກັບຜູ້ຍິງອີກດ້ວຍ.

ເຣື່ອງຂອງການນິຣະມິດສ້າງຜູ້ຍິງທີ່ພຣະເຈົ້າໄດ້ຊົງກະທຳນັ້ນເປັນແບບກາບກອນທີ່ສວຍງາມແລະເຮັດໃຫ້ຈິດວິນຍານເຄື່ອນໄຫວ. **ພຣະຜູ້ເປັນເຈົ້າຈຶ່ງຊົງເຮັດໃຫ້ຊາຍຜູ້ນັ້ນນອນຫລັບສນິດ**. ພຣະເຈົ້າໄດ້ຊົງກະທຳການຜ່າຕັດແລະໃຫ້ຢາສລົບຂອງພຣະອົງເອງ. ພຣະເຈົ້າ**ໄດ້ເອົາກະດູກຂ້າງຊີກນຶ່ງຂອງຜູ້ຊາຍ**ອອກມາແລະກໍ**ປິດບາດແຜ**, ຊຶ່ງໝາຍຄວາມວ່າໃຫ້ຫາຍດີຈາກປາກບາດການຜ່າຕັດ. ຈາກກະດູກຂ້າງນັ້ນ, ພຣະເຈົ້າໄດ້ສ້າງ**ຜູ້ຍິງ**ເມື່ອສ້າງແລ້ວພຣະອົງກໍ**ຊົງມອບຍິງນັ້ນໃຫ້ຜູ້ຊາຍ**. ຄວາມຮູ້ຈັກອັນແນ່ນອນຂອງຄວາມຕ້ອງການຂອງຊຶ່ງກັນແລະກັນ, ພຣະເຈົ້າໄດ້ສ້າງນິສັຍເຫລົ່ານັ້ນເພື່ອໃຫ້ມີຕໍ່ຊຶ່ງກັນແລະກັນເພື່ອໃຫ້ທັງສອງຝ່າຍມີຄວາມພໍໃຈ. ແມ້ກະທັ້ງ, ໃນການແຕ່ງງານ, ທັງຄູ່ຕ້ອງຍອມຮັບເອົາຊຶ່ງກັນແລະກັນເໝືອນກັບວ່າເປັນຂອງຂວັນທີ່ມາຈາກພຣະເຈົ້າເອງ.

ອາດາມໄດ້ຮັບເອົາເອວາຈາກພຣະເຈົ້າແລະເວົ້າວ່າ: "**ໃນທີ່ສຸດນີ້ເດ, ຜູ້ຊຶ່ງມີຮູບຮ່າງຄືເຮົາ, ກະດູກຂອງນາງມາຈາກກະດູກຂອງເຮົາ, ເນື້ອໜັງຂອງນາງມາຈາກເນື້ອໜັງຂອງເຮົາ**." ເພາະວ່າຜູ້ຊາຍແລະຜູ້ຍິງໄດ້ຖືກສ້າງຂຶ້ນສຳລັບຊຶ່ງກັນແລະກັນໃນຄວາມຄົບເຕັມທຸກຢ່າງແລະຄວາມພຽງພໍໃຈທຸກປະການ. ຜູ້ຊາຍຈຶ່ງຕ້ອງລາຈາກພໍ່ແມ່ຂອງ**ຕົນໄປຕິດພັນຢູ່ກັບເມັຽຂອງຕົນ**. ໃນຊີວິດແຕ່ງງານ, ພວກເຂົາກາຍເປັນຄົນໆດຽວກັນ. ໃນພຣະຄຳຂໍ້ນີ້ໄດ້ບັນລະຍາຍເຖິງເຣື່ອງພຣະເຈົ້າໄດ້ສ້າງຕັ້ງຄອບຄົວແລະຈັດການແຕ່ງງານຂຶ້ນທີ່ເປັນສາຍສຳພັນທາງດຽວເທົ່ານັ້ນທີ່ຖືກຕ້ອງໃນການສະແດງອອກທາງເພດຕໍ່ກັນ. ຕອນສຳຄັນໃນພຣະຄຳຂໍ້ນີ້ໄດ້ກ່າວວ່າ**ຜູ້ຊາຍພ້ອມທັງເມັຽຂອງລາວເປືອຍກາຍຢູ່, ໂດຍບໍ່ຮູ້ສຶກລະອາຍກັນເລີຍ**. ພາຍໃນສາຍສຳພັນຂອງການແຕ່ງງານ, ພຣະເຈົ້າໄດ້ມີແຜນການສຳລັບຜູ້ເປັນຜົວແລະເມັຽໃຫ້ສຸກສັນຕໍ່ກັນແລະກັນຢ່າງບໍ່ມີຄວາມລະອາຍໃດໆ. ສາຍສຳພັນທາງເພດຂອງພວກເຂົາກໍຖືກອວຍພອນເພາະໄດ້ໃຊ້ສຳລັບເປົ້າໝາຍຂອງການອອກແບບຊົງສ້າງ-ການຊົມໃຊ້ຂອງການສຳພັນຂອງພວກເຂົາ ຮວມທັງຄວາມຕ້ອງການທາງຊີວະວິທຍາຂອງພວກເຂົາດ້ວຍ.

ຄົນຜູ້ທີ່ໃຊ້ທາງເພດໃນທາງຫາປໂຍດສ່ວນຕົວຊຶ່ງກໍຈະພົບກັບຄວາມລະອາຍ. ຍາມໃດກໍຕາມທີ່ພວກເຮົາໃຊ້ຂອງຂວັນທີ່ມາຈາກພຣະເຈົ້າໃນທາງຜິດ, ພວກເຮົາກໍຮູ້ສຶກວ່າໄດ້ເຮັດຜິດບາບ. ບໍ່ພຽງແຕ່ວ່າໃຊ້ໃນທາງຜິດເປັນເຫດໃຫ້ບໍ່ມີຄວາມພໍໃຈດອກ, ແຕ່ຍັງມີຜົນຕອບແທນອັນເຈັບແສບຫລາຍຢ່າງຕາມມາດ້ວຍ.

ຄຳຖາມຢ່າງທຳມະຊາດກໍຄື: "ພວກຄົນໂສດທີ່ກາຍກະສຽນແລ້ວຈະມີຊີວິດທີ່ຄົບເຕັມຢ່າງໃດ?" ພວກເຮົາຄວນຈະສຳນຶກວ່າຊີວິດແຕ່ງງານໃນຕົວມັນເອງກໍບໍ່ມີການຮັບປະກັນວ່າຈະມີຊີວິດຢ່າງຄົບເຕັມ. ຈຸດໝາຍກໍຄືພຣະເຈົ້າໃຫ້ຄົນມີຄອບຄົວກໍເພື່ອພວກເຂົາຈະເຮັດໃຫ້ຄວາມຕ້ອງການທາງສາຍສຳພັນໃຫ້ເກີດຜົນແລະໃນທາງທີ່ມີປະສິດທິພາບ. ຂນະທີ່ຄົນໂສດມີຄວາມກະຫາຍທາງເພດເຂົາຕ້ອງໄດ້ອົດຈົນເຖິງໄດ້ແຕ່ງງານ, ຄວາມອີ່ມເອີບແຫ່ງຄວາມຕ້ອງການທາງສາຍສຳພັນຂອງພວກເຂົາແມ່ນຜ່ານທາງຄອບຄົວ, ໝູ່ຄູ່, ແລະຄອບຄົວຂອງພຣະເຈົ້າທີ່ຮ້ອງວ່າຄຣິສຕະຈັກ(ໂບດ).

ການທີ່ພຣະເຈົ້າໄດ້ອອກແບບສ້າງມະນຸດກໍເພື່ອໃຫ້ສະທ້ອນໃຫ້ເຫັນພາບພົດຂອງພຣະອົງ, ທີ່ຮວມທັງຄວາມບໍຣິສຸດຂອງພຣະອົງ, ພຣະເຈົ້າປະທານສາຍສຳພັນທາງເພດໃນຫລັກຂອບເຂດຂອງການແຕ່ງງານ ແລະຄອບຄົວໃນການທີ່ຈະເຮັດໃຫ້ພື້ນຖານຂອງຄວາມຕ້ອງການຂອງຄົນສ່ວນຫລາຍຄົບເຕັມ ບໍ່ວ່າຈະເປັນຄວາມຕ້ອງການທາງສາຍສຳພັນ, ຄວາມຕ້ອງການທາງຄວາມຮູ້ສຶກ, ແລະຄວາມຕ້ອງການຂອງທາງຮ່າງກາຍ.

## ໒. <u>ຂອບເຂດຂອງຊີວິດແຕ່ງງານ ການຄຸ້ມກັນຮັກສາແລະການເພິ່ງພໍໃຈ</u> (ສຸພາສິດ 5:15-20)

ການປະທານພິທີແຕ່ງງານສຳລັບຄວາມເພິ່ງພໍໃຈຕໍ່ຄວາມຕ້ອງການພື້ນຖານຂອງມະນຸດ, ພຣະເຈົ້າໄດ້ອອກແບບໃຫ້ຂອບເຂດແກ່ຊີວິດແຕ່ງງານໃນການຄຸ້ມກັນຮັກສາແລະຮວມທັງຄວາມເພິ່ງພໍໃຈດ້ວຍ. ໃນພິທີແຕ່ງງານຂອບເຂດອັນ

ສຳຄັນທີ່ສຸດແມ່ນ**ຄວາມຊື່ສັດ**ຕໍ່ຊີວິດການແຕ່ງງານນັ້ນ.

ອອກຈາກຂອບເຂດຂອງພຣະເຈົ້າ, ມະນຸດພົບກັບຄວາມບໍ່ພຽງພໍໃຈ, ຂັດແຍ້ງ, ພະຍາດຮ້າຍ, ຄວາມເຈັບປວດ, ແລະຮວມທັງຄວາມຕາຍດ້ວຍ. ພາຍໃນຂອບເຂດຂອງພຣະເຈົ້າ, ພວກເຮົາຈະພົບເຫັນເຖິງຄວາມປາຖນາຂອງພຣະເຈົ້າໃຫ້ພວກເຮົາຍິນດີແລະເຫັນເຖິງຄວາມຈົບງາມຂອງສາຍສຳພັນທາງເພດ.

ໃນພຣະທັມສຸພາສິດບັນທຶກເຣື່ອງຂອງພໍ່ທີ່ສລາດທີ່ໃຫ້ຄຳແນະນຳແກ່ລູກຊາຍຂອງຕົນ. ຜູ້ຂຽນໄດ້ຢັ້ງຢືນວ່າພິທີແຕ່ງງານແມ່ນເຫມາະສົມຕໍ່ຫລັກຂອບເຂດສຳລັບການມີສາຍສຳພັນທາງເພດແລະໄດ້ເຕືອນໃຫ້ເຫັນອັນຕະລາຍຕໍ່ການມີສ່ວນຮ່ວມທາງເພດນອກຈາກການແຕ່ງງານ. ການພັນລະນາກັບການໃຫ້ຕົວຢ່າງ, ຜູ້ຂຽນໄດ້ໃຫ້ຄຳແນະນຳແກ່ລູກຊາຍຂອງຕົນວ່າຈົ່ງດື່ມນ້ຳຈາກຖັງເກັບນ້ຳຂອງເຈົ້າແລະດື່ມນ້ຳໄຫລຈາກບໍ່ຂອງເຈົ້າເອງ. ການສຳພັນທາງເພດແມ່ນເພື່ອຄວາມປິຕິຍິນດີ, ແຕ່ສເນຫາອັນແທ້ຈິງສາມາດພົບໄດ້ພາຍໃນຄວາມຊື່ສັດໃນຊີວິດແຕ່ງງານເທົ່ານັ້ນ.

ຜູ້ຂຽນທີ່ເຕັມດ້ວຍສະຕິປັນຍາເນັ້ນໃສ່ສາຍສຳພັນນີ້ໃນທາງທຳມະຊາດສ່ວນຕົວ. ບໍ່ຄວນຈະແບ່ງປັນໃຫ້**ກັບຄົນແປກຫນ້າ**. ຄຳວ່າຄົນແປກຫນ້າໃນທີ່ນີ້ບໍ່ໄດ້ຫມາຍເຖິງຄົນທີ່ເຮົາບໍ່ຮູ້ຈັກມາກ່ອນ, ແຕ່ຫມາຍເຖິງຜູ້ໃດຜູ້ນຶ່ງນອກຈາກສາຍສຳພັນໃນພິທີການແຕ່ງງານ. ຜູ້ເປັນພໍ່ຕັ້ງຄຳຖາມຕໍ່ລູກຊາຍຂອງຕົນວ່າລູກເອີຍ ເປັນຫຍັງເຈົ້າຈຶ່ງຕ້ອງເອົາຄວາມຮັກຂອງເຈົ້າໃຫ້ແກ່ຍິງອື່ນ ເປັນຫຍັງເຈົ້າຈຶ່ງໄປຫາຄວາມສຸກກັບເມັຽຂອງຊາຍອື່ນ.

ພຣະເຈົ້າຕ້ອງການໃຫ້ພວກເຮົາພົບກັບຄວາມຊົມຊື່ນຍິນດີ ແລະຄວາມຄົບເຕັມພາຍໃນການແຕ່ງງານຂອງພວກເຮົາ. ພຣະຄັມພີໃຊ້ຄຳວ່າສເນຫາ ແລະເພິ່ງພໍໃຈໃນການບັນລະຍາຍເຖິງຜົນຂອງແຜນການທີ່ພຣະເຈົ້າມີສຳລັບສາຍສຳພັນທາງເພດລະຫວ່າງຄູ່ຜົວເມັຽ. ລູກຊາຍກໍຈະໄດ້ຮັບພຣະພອນເມື່ອລາວພົບສເນຫາໃນເມັຽຂອງລາວເມື່ອໄດ້ໃນຍາມຫນຸ່ມນັ້ນ. ລາວຄວນຈະເຫັນວ່າເມັຽຂອງລາວເປັນທີ່ຫນ້າຮັກແລະຫນ້າຂອບພຣະຄຸນ. ຜົວຜູ້ທີ່ຫລົງເສັຽຫາຍຈາກຄວາມບໍຣິສຸດແລະຄວາມຮັກແທ້ຈິງຂອງເມັຽຈະບໍ່ສາມາດຊອກອັນໃດນອກຂອບເຂດການແຕ່ງງານມາທົບແທນໄດ້.

ພຣະເຈົ້າໄດ້ອອກແບບສາຍສຳພັນຂອງພິທີແຕ່ງງານໃນຫລັກຂອບເຂດໃຫ້ມີການສຳພັນທາງເພດເພື່ອຄວາມປິຕິຍິນດີ. ການໂຄຣົບນັບຖືຂອບເຂດທີ່ພຣະເຈົ້າຕັ້ງໄວ້ສຳລັບການແຕ່ງງານແລະເຣື່ອງເພດເພື່ອນຳຄວາມຄົບເຕັມມາສູ່ຊີວິດ; ການບໍ່ນັບຖືຂອບເຂດເຫລົ່ານັ້ນແມ່ນບໍ່ສລາດແລະນຳຕົວເອງສູ່ອັນຕະລາຍ. ຫລັກການອັນນີ້ແມ່ນສຳລັບທັງພວກຜູ້ຊາຍແລະພວກຜູ້ຍິງ. ພວກເຮົາຕ້ອງເຂົ້າໃຈຕໍ່ການເອົາມາປະກອບໃຊ້ສຳລັບຄຣິສຕຽນບໍ່ພຽງແຕ່ການຫລິ້ນຊູ້ທາງເພດແລະຜິດປະເພນີເທົ່ານັ້ນ, ແຕ່ຍັງຮວມທັງການຜິດສິນທັມດ້ານອື່ນອີກເຊັ່ນການໃຊ້ອິນເທີເນັດເບິ່ງຫນັງໂປ້ (ຮູບໂປ້)ແລະທ່ຽວສົນທະນາແບບຊູ້ສາວກັບຄົນໃນຫ້ອງສົນທະນາ(ແຈດຣຸມ). ການອະນຸຍາດໃຫ້ພາບພົດເຫລົ່ານີ້ແລະ "ເກມ" ເຫລົ່ານີ້ເຂົ້າມາໃນຊີວິດຂອງທ່ານແລ້ວມັນກໍເຮັດໃຫ້ຕົກເປັນເຫຽື່ອຂອງການລໍ້ລວງຂອງ "ຕັນຫາໃນຫົວໃຈຂອງທ່ານ" ທີ່ພຣະເຢຊູປຽບໃສ່ກັບຜູ້ທີ່ມີໃຈກຳນັດຕໍ່ຍິງນັ້ນກໍຫລິ້ນຊູ້ເສັຽແລ້ວ(ມັດທາຍ 5:27-30).

## 3. <u>ພຣະເຈົ້າເອີ້ນຜູ້ທີ່ເຊື່ອໃຫ້ດຳຣົງຊີວິດຢ່າງບໍຣິສຸດ</u> (ໂຣມ 13:11-14)

ແຜນການຂອງພຣະເຈົ້າສຳລັບລູກຂອງພຣະອົງຮວມທັງການດຳເນີນຊີວິດຢ່າງບໍຣິສຸດ. ພຣະອົງຊົງບໍຣິສຸດແລະບັນຊາໃຫ້ໄພ່ພົນຂອງພຣະອົງມີຄວາມບໍຣິສຸດເຊັ່ນກັນ. ການດຳຣົງຊີວິດໃນທາງສິນທັມແມ່ນຈຳເປັນບໍ່ພຽງແຕ່ຖວາຍກຽດແກ່ພຣະຜູ້ເປັນເຈົ້າອົງຊົງຊອບທັມຂອງພວກເຮົາ, ແຕ່ວ່າຍັງເປັນສ່ວນສຳຄັນທີ່ສຸດຂອງຊີວິດພວກເຮົາເອງດ້ວຍ.

ການຂຽນຈົດຫມາຍເຖິງຊາວຄຣິສຕຽນທີ່ກຸງໂຣມ, ອາຈານໂປໂລໄດ້ເວົ້າເຖິງການສະເດັດກັບມາດ້ວຍສະງ່າຣາສີຂອງພຣະຄຣິດແລະໃຫ້ຮີບດ່ວນໃນການດຳເນີນຊີວິດໃນທາງສິນທັມຢ່າງບໍຣິສຸດ. ການຮູ້ຈັກກາລະເວລາ, ພວກທີ່ເຊື່ອຄວນພິຈາລະນາໃຫ້ຖີ່ຖ້ວນຂຶ້ນວ່າພວກເຂົາດຳເດີນຊີວິດຢ່າງໃດ. ອາຈານໂປໂລໄດ້ຂຽນໄວ້ວ່າ **ມັນເຖິງເວລາຮຽບຮ້ອຍແລ້ວ...ກາງຄືນກໍເກືອບຈະຜ່ານໄປແລ້ວ...ຮຸ່ງເຊົ້າໃກ້ຈະມາເຖິງແລ້ວ**. ປໂຍກນີ້ໄດ້ບັນລະຍາຍເຖິງຄວາມຮີບດ່ວນສຳລັບພວກທີ່ເຊື່ອ**ໃຫ້ສວມອາວຸດແຫ່ງຄວາມສວ່າງ**. ພາບປະກອບຕົວຢ່າງອັນນີ້ມີສ່ວນສຳພັນກັບຄວາມສວ່າງຂອງຜູ້ມີກຽດ, ການຮູ້ຈັກວ່າການປະພຶດຂອງຄົນວ່າເຫມາະສົມຫລາຍກໍຕໍ່ເມື່ອການກະທຳຂອງພວກເຂົາຕົງ

ກັບການປາກົດຕົວຂອງພວກເຂົາຕໍ່ຄົນອື່ນແລະຕໍ່ພຣະເຈົ້າດ້ວຍ. ອາວຸດແຫ່ງຄວາມສວ່າງນີ້ແມ່ນການປົກປັກຮັກສາຕໍ່ການເລືອກທີ່ບໍ່ບໍຣິສຸດ.

ຄວາມບໍຣິສຸດທາງສິນທັມແມ່ນເວົ້າແບບກວ້າງກວ່າຄວາມປະພຶດແລະການກະທຳຂອງຜູ້ນຶ່ງທີ່ສຳພັນກັບການແຕ່ງງານແລະເຣື່ອງຂອງທາງເພດ. ພວກທີ່ເຊື່ອບໍ່ຄວນຈະຖືກເອີ້ນວ່າເປັນ**ພວກເສບສຸຣາຢາເມົາ**. ພວກເຂົາບໍ່ຄວນເຂົ້າສ່ວນກັບການ**ບໍ່ບໍຣິສຸດຫລືໃນການຮ່ວມປະເວນີໂດຍບໍ່ເລືອກໜ້າ**. ຫລືບໍ່ຄວນຈະຖືກຮ້ອງວ່າພວກທີ່ມີສາຍສຳພັນທີ່**ອິວາດເຫິງສາກັນ**. ຄຳເວົ້າເຫລົ່ານີ້ແມ່ນຕົວຢ່າງຊື່ໆ, ບໍ່ແມ່ນລຳດັບທີ່ລະອຽດລະອໍທັງໝົດ, ຂອງການປະພຶດທີ່ສົດໆຮ້ອນໆ. ບໍ່ມີຜູ້ເຊື່ອຜູ້ໃດສາມາດຍ່າງໃນແສງສວ່າງແຫ່ງວິນຍານຂອງພຣະເຈົ້າແລະຈະປະພຶດເຊັ່ນນີ້.

ທາງທີ່ດີທີ່ສຸດໃນການຫລີກເວັ້ນ**ການກະທຳຂອງຄວາມມືດ**ຄືຕ້ອງ**ສວມພຣະອົງເຈົ້າເຢຊູຄຣິດ**. ປະໂຍກນີ້ບັນລະຍາຍການກະທຳໃນການຍອມຕ້ອນຮັບເອົາພຣະຄຣິດວ່າເປັນພຣະຜູ້ຊ່ອຍໃຫ້ພົ້ນແລະເປັນອົງພຣະຜູ້ເປັນເຈົ້າ. ມັນຍັງໄດ້ສະແດງໃຫ້ເຫັນພາບຂອງພວກທີ່ເຊື່ອສວມເອົາຊີວິດຂອງພຣະຄຣິດມາເປັນຂອງຕົນ ໂດຍຜ່ານທາງພຣະວິນຍານບໍຣິສຸດ. ພຣະວິນຍານໄດ້ເພີ້ມພະລັງໃຫ້ພວກເຮົາດຳຣົງຢູ່ໃນຄວາມບໍຣິສຸດທາງສິນທັມ.

ຜູ້ທີ່ຢູ່ໃນຄວາມສວ່າງແລະຢູ່ໃນຊີວິດຂອງພຣະຄຣິດ**ຈະບໍ່ຈັດຫາອັນໃດເພື່ອບຳຣຸງຕັນຫາຂອງເນື້ອກາຍ**. ຈົ່ງຫ່າງໜີຈາກຝ່າຍເນື້ອໜັງ, ຜູ້ທີ່ເຊື່ອສາມາດດຳຣົງຊີວິດທີ່ບໍຣິສຸດທີ່ພໍພຣະທັຍພຣະບິດາເຈົ້າ. ແລະທັງໝົດນີ້, ມັນກໍແມ່ນຄວາມປາຖນາອັນຍິ່ງໃຫຍ່ສຳລັບລູກແທ້ຂອງພຣະເຈົ້າບໍ່ແມ່ນຫລື? ໃນແສງສວ່າງຂອງການກັບມາຂອງພຣະຄຣິດໃນບໍ່ຊ້ານີ້, ພວກທີ່ເຊື່ອຕ້ອງຕຽມຕົວຢູ່ສເມີແລະເອົາໃຈໃສ່ຕໍ່ການເອີ້ນໃຫ້ເປັນຜູ້ນຳພາໃນການດຳຣົງຊີວິດໃຫ້ບໍຣິສຸດທາງສິນທັມແທນທີ່ຈະຈັດຫາບາງສິ່ງເພື່ອບຳຣຸງຄວາມປາຖນາທີ່ເຫັນແກ່ຕົວຂອງພວກເຂົາ.

ຖ້າວ່າພວກເຮົາເປັນບຸດຂອງອົງບໍຣິສຸດ, ພຣະບິດາຜູ້ສະຖິດໃນສວັນ, ພວກເຮົາຄວນຈະສະທ້ອນພາບພົດຂອງພຣະອົງ. ຄົນອື່ນໆເດສາມາດເຫັນພາບຄອບຄົວຂອງພຣະເຈົ້າໃນວິຖີທາງຊີວິດຂອງພວກເຮົາບໍ່? ການປະພຶດຂອງພວກເຮົານຳຜົນດີຫລືຜົນເສັຽມາສູ່ພຣະບິດາຂອງພວກເຮົາ? ທຸກໆມື້, ພວກເຮົາປະເຊີນກັບການເລືອກຫລາຍຢ່າງທາງດ້ານສິນທັມ. ພວກເຮົາຄວນຈະຮັກອົງພຣະຜູ້ເປັນເຈົ້າໃຫ້ຫລາຍທີ່ສຸດເພື່ອວ່າການເລືອກແຕ່ລະຢ່າງນັ້ນຈະນຳພຣະກຽດໃຫ້ພຣະອົງແລະເຮັດໃຫ້ເປົ້າໝາຍທີ່ພຣະອົງມີສຳລັບຊີວິດຂອງພວກເຮົາຄົບເຕັມບໍຣິບູນ. ຄວາມຈິງທີ່ໄດ້ສອນໃນບົດຮຽນຂອງມື້ນີ້ຮວມໄດ້ດັ່ງຕໍ່ໄປນີ້:

- ພຣະເຈົ້າບໍ່ພຽງແຕ່ໄດ້ສ້າງມະນຸດກັບຄວາມຕ້ອງການທາງຊີວະວິທຍາ, ຄວາມຕ້ອງການທາງສັງຄົມ, ແລະຄວາມຕ້ອງການທາງວິນຍານ, ແຕ່ພຣະອົງຍັງໄດ້ປະທານທີນທາງໃຫ້ໄດ້ຄົບຕາມຄວາມຕ້ອງການນັ້ນໆ.
- ພຣະເຈົ້າບໍ່ພຽງແຕ່ໄດ້ອອກແບບໃຫ້ຂອບເຂດສຳລັບຄວາມເພິ່ງພໍໃຈຂອງຄວາມຕ້ອງການຂອງມະນຸດ, ແຕ່ພຣະອົງຍັງໄດ້ອອກແບບສ້າງຂອບເຂດເຫລົ່ານັ້ນເພື່ອປົກປ້ອງການຄົ້ນຫາຄວາມເພິ່ງພໍໃຈຂອງມະນຸດ.
- ພຣະເຈົ້າບໍ່ພຽງແຕ່ຮຽກເອີ້ນບຸດທັງຫລາຍຂອງພຣະອົງໃຫ້ດຳຣົງຊີວິດຢ່າງບໍຣິສຸດ, ແຕ່ພຣະອົງຍັງປະທານພຣະວິນຍານບໍຣິສຸດຂອງພຣະອົງໃຫ້ເພີ້ມພະລັງພວກເຮົາໃຫ້ສາມາດດຳຣົງຕາມວິຖີທາງຊີວິດນັ້ນ.